ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 444 /ອຊ

ນະຄອນຫລວງວຽງຈັນ, ວັນທີ 10 ເມສາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

ເຖິງ: ບັນດາບໍລິສັດແສງ, ສີ, ສຽງ.

ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງແສງ, ສີ, ສຽງ ສໍາລັບງານລ້ຽງອາຫານຄໍ່າຂອງກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ ໃນວັນທີ 21-27 ກໍລະກົດ 2024.

- ອີງຕາມການເຫັນດີຂອງ ຄະນະນໍາກະຊວງການຕ່າງປະເທດ ຄັ້ງວັນທີ 4 ເມສາ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງສະໜອງແສງ, ສີ, ສຽງ ສໍາລັບງານລ້ຽງອາຫານຄໍ່າຂອງກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 26 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

ການປະມູນຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 11 ເມສາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 14:00 ໂມງຂອງວັນທີ 30 ເມສາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 14:30 ໂມງ ຂອງວັນທີ 30 ເມສາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ ກົມອາຊຽນ

ເຮືອນແກ້ວ ສັງສົມສັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 443 /ອຊ

ນະຄອນຫລວງວຽງຈັນ, ວັນທີ 10 ເມສາ 2024

# ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນສະໜອງແສງ, ສີ, ສຽງ ສຳລັບງານລ້ຽງອາຫານຄ່ຳຂອງກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 26 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2024 ຫຼື 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄ້ຳຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີອຸປະກອນທີ່ໄດ້ມາດຕະຖານ, ມີຈຳນວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງສະໜອງແສງ, ສີ, ສຽງ ແລະ ອຸປະກອນດົນຕີຄົບຊຸດ ແລະ ຕ້ອງມີເຄື່ອງພ້ອມກ່ອນວັນທີ 20 ກໍລະກົດ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ເຮືອນແກ້ວ ສັງສົມສັກ